ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເລກທີ - 060 /ກພວຕ

ນະຄອນຫຼວງວຽງຈັນ, ວັນທີ 29 ມິຖຸນາ 2026

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການຄົ້ນຄວ້າວິທະຍາສາດ
# ຂອງ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 90/ນຍ, ລົງວັນທີ 24 ເມສາ 2026;
- ອີງຕາມ ດຳລັດວ່າດ້ວຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 681/ລບ, ລົງວັນທີ 24 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກອງເລຂາກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 125/ກລຂ, ລົງວັນທີ 24 ມິຖຸນາ 2026.

**ປະທານສະພາບໍລິຫານ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ໃນຂົງເຂດວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານການຄົ້ນຄວ້າວິທະຍາສາດ ໂດຍການສະໜັບສະໜູນ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ການຄຸ້ມຄອງການຄົ້ນຄວ້າວິທະຍາສາດ**

ການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ແມ່ນການຄຸ້ມຄອງຫົວຂໍ້ຄົ້ນຄວ້າວິທະຍາສາດ, ກິດຈະກຳສະໜັບສະໜູນຍົກສູງຄວາມອາດສາມາດ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ຖານຂໍ້ມູນຊ່ຽວຊານ ແລະ ຄະນະກຳມະການວິຊາການ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

**ການຄົ້ນຄວ້າວິທະຍາສາດ** ໝາຍເຖິງ ຂະບວນການຄົ້ນຫາ, ສ້າງຄວາມຮູ້, ຄວາມເຂົ້າໃຈ ກ່ຽວກັບປະກົດການ ທາດແທ້ ແລະ ກົດເກນ ຂອງທຳມະຊາດ ແລະ ສັງຄົມ ລວມທັງວັດຖຸ ແລະ ຈິນຕະນາການ ທີ່ໄດ້ຮັບການຢັ້ງຢືນຈາກການທົດສອບຕົວຈິງ;

1. **ການຄົ້ນຄວ້າວິທະຍາສາດທຳມະຊາດ** ໝາຍເຖິງ ຂະບວນການຄົ້ນຫາ, ສ້າງຄວາມຮູ້, ຄວາມເຂົ້າໃຈກ່ຽວກັບປະກົດການ, ທາດແທ້ ແລະ ກົດເກນທຳມະຊາດ ເພື່ອເປັນຫຼັກມູນພື້ນຖານທາງດ້ານວິທະຍາສາດ ແລະ ນຳໃຊ້ເຂົ້າໃນວຽກງານພັດທະນາເສດຖະກິດ-ສັງຄົມ, ສາທາລະນະສຸກ, ປ້ອງການຊາດ-ປ້ອງກັນຄວາມສະຫງົບ, ປົກປັກຮັກສາສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງສົມເຫດສົມຜົນ ລວມທັງການຄົ້ນຫາສາເຫດ, ວິທີການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບ ຂອງໄພພິບັດທຳມະຊາດ;

2. **ການຄົ້ນຄວ້າວິທະຍາສາດສັງຄົມ** ໝາຍເຖິງ ຂະບວນການຄົ້ນຫາ, ສ້າງຄວາມຮູ້, ຄວາມເຂົ້າໃຈ ກ່ຽວກັບປະກົດການ, ທາດແທ້ ແລະ ກົດເກນຂອງສັງຄົມ ເພື່ອສະໜອງຫຼັກມູນວິທະຍາສາດ ການວາງນະໂຍບາຍ, ຍຸດທະສາດ, ຮູບແບບພັດທະນາເສດຖະກິດ-ສັງຄົມ ໂດຍໃຫ້ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຂອງປະເທດ ລວມທັງການຄົ້ນຄວ້າຈຸດພິເສດທາງດ້ານວັດທະນະທຳ, ປະຫວັດສາດ, ວັນນະຄະດີ ອັນເປັນເອກະລັກຂອງຊາດ ແລະ ຂອງປະຊາຊົນບັນດາເຜົ່າ;

3. **ວາລະສານສາກົນທີ່ໜ້າເຊື່ອຖື** ໝາຍເຖິງ ບັນດາວາລະສານວິທະຍາສາດ ທີ່ຖືກຄັດເລືອກຈາກຖານຂໍ້ມູນຂອງ Web of Science (Science Citation Index Expanded, Social Sciences Citation Index ແລະ Arts and Humanities Citation Index) ຫຼື SCOPUS Index ໂດຍໄດ້ຮັບການຕົກລົງເຫັນດີ **ຈາກສະພາບໍລິຫານກອງທຶນ**ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ບົນພື້ນຖານໃຫ້ຄຳປຶກສາຂອງຄະນະກຳມະການວິຊາການ;

4. **ຄຸນທາດດ້ານວິທະຍາສາດ** ໝາຍເຖິງ ລະບົບແນວຄິດ, ທັດສະນະຄະຕິ, ພຶດຕິກຳ ແລະ ຈິດວິນຍານ ທີ່ຕັ້ງຢູ່ບົນພື້ນຖານຂອງເຫດ ແລະ ຜົນ, ການສັງເກດ, ການທົດລອງ ແລະ ການຊອກຫາຄວາມຈິງຢ່າງມີລະບົບ ໂດຍບໍ່ໃຊ້ຄວາມຮູ້ສຶກສ່ວນຕົວ ຫຼື ຄວາມເຊື່ອທີ່ບໍ່ມີຫຼັກຖານມາຕັດສິນ.

### ມາດຕາ 4 ຫຼັກການຄຸ້ມຄອງການຄົ້ນຄວ້າວິທະຍາສາດ

ການຄຸ້ມຄອງການຄວ້າວິທະຍາສາດ ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ບູລິມະສິດຕາມແຜນພັດທະນາເສດຖະກິດ-ສັງຄົມ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ;

2. ຮັບປະກັນຄວາມປອດໄພຕໍ່ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ຮັບປະກັນຄວາມຍຸຕິທຳ, ພາວະວິໄສ, ໃຫ້ມີຈັນຍາບັນ-ຈັນຍາທຳຕໍ່ວິຊາຊີບ, ເຄົາລົບສິດເຈົ້າຂອງຊັບສິນທາງປັນຍາ, ພູມປັນຍາ, ໃຫ້ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບ ໃນການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ;

4. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ສັງຄົມ ໃນການຄົ້ນຄວ້າວິທະຍາສາດ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງພາຍໃນ ແລະ ສາກົນ ທີ່ດຳເນີນການຄົ້ນຄວ້າວິທະຍາສາດ ຢູ່ ສປປ ລາວ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ຊຸກຍູ້, ສົ່ງເສີມ ການພົວພັນ, ຮ່ວມມືກັບພາກພື້ນ ແລະ ສາກົນ ກ່ຽວກັບການຄົ້ນຄວ້າວິທະຍາສາດ, ແລກປ່ຽນຂໍ້ມູນຂ່າວສານ, ບົດຮຽນການຄຸ້ມຄອງການຄົ້ນຄວ້າວິທະຍາສາດ, ພັດທະນາບຸກຄະລາກອນ, ໂຄງລ່າງພື້ນຖານ, ການຊ່ວຍເຫຼືອທາງດ້ານວິຊາການ, ງົບປະມານການຈັດກອງປະຊຸມວິທະຍາສາດ ລະດັບຕ່າງໆ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 2
## ການຄຸ້ມຄອງຫົວຂໍ້ຄົ້ນຄວ້າວິທະຍາສາດ

**ມາດຕາ 7 ການຄົ້ນຄວ້າວິທະຍາສາດ**

ການຄົ້ນຄວ້າວິທະຍາສາດ ປະກອບມີ ດັ່ງນີ້:

1. ຫົວຂໍ້ຄົ້ນຄວ້າວິທະຍາສາດ ພື້ນຖານ;
2. ຫົວຂໍ້ຄົ້ນຄວ້າວິທະຍາສາດ ນຳໃຊ້.

**ມາດຕາ 8 ຫົວຂໍ້ຄົ້ນຄວ້າວິທະຍາສາດ ພື້ນຖານ**

ຫົວຂໍ້ຄົ້ນຄວ້າວິທະຍາສາດ ພື້ນຖານ ແມ່ນຂະບວນການເຄື່ອນໄຫວດ້ານວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ ທີ່ແນໃສ່ເພີ່ມຄວາມຮູ້ທີ່ເປັນພື້ນຖານ ທາງດ້ານວິທະຍາສາດ.

**ມາດຕາ 9 ຫົວຂໍ້ຄົ້ນຄວ້າວິທະຍາສາດ ນຳໃຊ້**

ຫົວຂໍ້ຄົ້ນຄວ້າວິທະຍາສາດ ນຳໃຊ້ ແມ່ນຂະບວນການເຄື່ອນໄຫວ ນຳເອົາຄວາມຮູ້ພື້ນຖານທາງດ້ານວິທະຍາສາດ ມານຳໃຊ້ເຂົ້າໃນການປະດິດສ້າງ ແລະ ປະດິດແຕ່ງ ເພື່ອສ້າງຜະລິດຕະພັນອອກມາຮັບໃຊ້ສັງຄົມ.

**ມາດຕາ 10 (ປັບປຸງ) ຂະໜາດຂອງຫົວຂໍ້ຄົ້ນຄວ້າ**

ຂະໜາດຂອງຫົວຂໍ້ຄົ້ນຄວ້າ ແບ່ງອອກເປັນ 3 ຂະໜາດຄື:

1. ຂະໜາດນ້ອຍ ງົບປະມານ ບໍ່ເກີນ 150 ລ້ານກີບ;
2. ຂະໜາດກາງ ງົບປະມານ ບໍ່ເກີນ 500 ລ້ານກີບ;
3. ຂະໜາດໃຫຍ່ ງົບປະມານ ຫຼາຍກວ່າ 500 ລ້ານກີບ.

**ມາດຕາ 11 ວິທີດຳເນີນການຄັດເລືອກຫົວຂໍ້ຄົ້ນຄວ້າວິທະຍາສາດ**

ວິທີດຳເນີນການຄັດເລືອກຫົວຂໍ້ຄົ້ນຄວ້າວິທະຍາສາດ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີ ດັ່ງນີ້:

1. ການອອກແຈ້ງການ ແລະ ການຮັບເອກະສານ;
2. ການຄັດເລືອກຫົວຂໍ້;
3. ການປະເມີນງົບປະມານຫົວຂໍ້;
4. ການເຊັນສັນຍາຫົວຂໍ້;
5. ການປະເມີນການຈັດຕັ້ງປະຕິບັດແຕ່ລະໄລຍະ;
6. ການປ່ຽນແປງ;
7. ການປະເມີນຜົນ ແລະ ການຮັບຮອງຜົນ ຂອງຫົວຂໍ້ຄົ້ນຄວ້າວິທະຍາສາດ;

8. ການຄຸ້ມຄອງຊັບສິນຕໍ່ກັບຫົວຂໍ້ຄົ້ນຄວ້າ.

**ມາດຕາ 12 (ປັບປຸງ) ການອອກແຈ້ງການ ແລະ ການຮັບເອກະສານ**

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ອອກແຈ້ງການກ່ຽວກັບທິດທາງການຄົ້ນຄວ້າ ທີ່ກອງທຶນໃຫ້ການສະໜັບສະໜູນ, ແນະນຳກ່ຽວກັບເງື່ອນໄຂ, ຂັ້ນຕອນການປະກອບເອກະສານທີ່ກ່ຽວຂ້ອງ ແລະ ກຳນົດເວລາໃຫ້ບັນດາບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຮັດການຄົ້ນຄວ້າວິທະຍາສາດ ແລະ ສົ່ງເອກະສານການລົງທະບຽນໃຫ້ແກ່ກອງເລຂາກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

ເອກະສານ ປະກອບໃຫ້ຖືກຕ້ອງຕາມແບບພິມ ທີ່ກອງທຶນໄດ້ກຳນົດໄວ້ ໂດຍໄດ້ຮັບການຢັ້ງຢືນຈາກພາກສ່ວນການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ສະພາວິທະຍາສາດ ຂອງຂະແໜງການ (ຖ້າມີ) ແລະ ສົ່ງໃຫ້ທັນຕາມກຳນົດເວລາ. ນອກຈາກນັ້ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຍັງມີຄວາມຮັບຜິດຊອບຕາມທີ່ລະບຸໄວ້ໃນຄຳແນະນຳ ຂອງ ກພວຕ.

**ມາດຕາ 13 (ປັບປຸງ) ການຄັດເລືອກຫົວຂໍ້**

ການຄັດເລືອກຫົວຂໍ້ ແມ່ນການພິຈາລະນາ, ເລືອກເຟັ້ນ, ກວດກາ ແລະ ປະເມີນຜົນຫົວຂໍ້ ໂດຍວິຊາການສະເພາະດ້ານກັ່ນກອງເບື້ອງຕົ້ນ, ຜູ້ຊ່ຽວຊານເອກະລາດ (ກໍລະນີຈຳເປັນ) ແລະ ຄະນະກຳມະການວິຊາການ ຕາມຫຼັກການ, ວິທີການ, ມາດຕະຖານ ການອະນຸມັດ ແລະ ປະກາດບັນຊີລາຍຊື່ຫົວຂໍ້, ການປະເມີນເອກະສານ ແລະ ການອະນຸມັດງົບປະມານຫົວ ຂໍ້ຄົ້ນຄວ້າວິທະຍາສາດ ທີ່ໄດ້ກຳນົດໄວ້.

ວິຊາການສະເພາະດ້ານກັ່ນກອງເບື້ອງຕົ້ນ, ຜູ້ຊ່ຽວຊານເອກະລາດ (ກໍລະນີຈຳເປັນ) ແລະ ຄະນະກຳມະການວິຊາການ ທີ່ຈະເຂົ້າມາຄັດເລືອກຫົວຂໍ້ຄົ້ນຄວ້າ ແມ່ນໄດ້ຮັບການແຕ່ງຕັ້ງຈາກປະທານສະພາບໍລິຫານກອງທຶນ ແລະປະຕິບັດຕາມລະບຽບການ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 14 ການປະເມີນງົບປະມານຫົວຂໍ້ຄົ້ນຄວ້າ**

ການປະເມີນງົບປະມານຫົວຂໍ້ຄົ້ນຄວ້າ ແມ່ນການພິຈາລະນາລາຍຈ່າຍທັງໝົດ ຂອງຫົວຂໍ້ຄົ້ນຄວ້າວິທະຍາສາດໂດຍຄະນະກຳມະການວິຊາການດ້ານການເງິນ.

ຄະນະກຳມະການວິຊາການດ້ານການເງິນ ແມ່ນໄດ້ຮັບການແຕ່ງຕັ້ງຈາກປະທານສະພາບໍລິຫານກອງທຶນ ແລະປະຕິບັດຕາມລະບຽບການ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 15 ສັນຍາຫົວຂໍ້ຄົ້ນຄວ້າ**

ສັນຍາຫົວຂໍ້ຄົ້ນຄວ້າ ແມ່ນການຕົກລົງກັນ ລະຫວ່າງ ຫົວໜ້າຫົວຂໍ້ຄົ້ນຄວ້າວິທະຍາສາດ ກັບ ກອງເລຂາກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໂດຍຜ່ານການເຊັນຢັ້ງຢືນຮັບຮອງຈາກການຈັດຕັ້ງທີ່ກ່ຽວຂ້ອງ ຕາມຫົວຂໍ້ຄົ້ນຄວ້າວິທະຍາສາດ ທີ່ໄດ້ຮັບການອະນຸມັດຈາກສະພາບໍລິຫານກອງທຶນ ຊຶ່ງພາໃຫ້ເກີດສິດ ແລະ ພັນທະທາງແພ່ງເກີດຂຶ້ນມີການປ່ຽນແປງ, ໂຈະ, ຍົກເລີກ ຫຼື ສິ້ນສຸດລົງ.

ພາຍຫຼັງທີ່ໄດ້ເຊັນສັນຍາຫົວຂໍ້ຄົ້ນຄວ້າວິທະຍາສາດ ຫົວໜ້າຫົວຂໍ້ຄົ້ນຄວ້າວິທະຍາສາດ ແລະ ຕາງໜ້າການຈັດຕັ້ງຮັບຜິດຊອບ ຈະໄດ້ຮັບການຝຶກອົບຮົມກ່ຽວກັບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າວິ ທະຍາສາດ ຈາກກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 16 ການປະເມີນການຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າ**

ການປະເມີນການຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າ ແມ່ນການປະເມີນຄວາມຄືບໜ້າ ແລະ ຜົນສຳເລັດການປະຕິບັດແຜນການ, ແຜນງານ, ສະພາບການ, ຜົນການຈັດຕັ້ງປະຕິບັດການນຳໃຊ້ງົບປະມານ ທີ່ມີຄວາມຈຳເປັນ ຂອງວຽກງານ, ພ້ອມທັງລາຍງານຜົນ ໃຫ້ແກ່ສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

ການປະເມີນການຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າ ປະກອບມີດັ່ງນີ້:

1. ການປະເມີນຜົນໃນແຕ່ລະໄລຍະ;
2. ການປະເມີນຜົນສໍາເລັດ.

**ມາດຕາ 17 (ປັບປຸງ) ການປ່ຽນແປງ**

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຄຸ້ມຄອງ ແລະ ຮັບຮອງເຫັນດີການປ່ຽນແປງ ເຊັ່ນ: ຊື່ຫົວຂໍ້ຄົ້ນຄວ້າ, ຈຸດປະສົງ, ເນື້ອໃນ, ງົບປະມານກິດຈະກໍາ, ການຈັດຕັ້ງຮັບຜິດຊອບ, ຫົວໜ້າຫົວຂໍ້ຄົ້ນຄວ້າໄລຍະເວລາຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າ ແລະ ອື່ນໆ ເພື່ອຮັບປະກັນຈຸດປະສົງ ແລະ ຜົນງານການຄົ້ນຄວ້າ ທີ່ໄດ້ກໍານົດໄວ້ເບື້ອງຕົ້ນ.

ສໍາລັບງົບປະມານຈັດຕັ້ງປະຕິບັດຫົວຂໍ້ທັງໝົດບໍ່ສາມາດປ່ຽນແປງ.

**ມາດຕາ 18 ການປະເມີນຜົນ ແລະ ການຮັບຮອງຜົນ ຂອງຫົວຂໍ້ຄົ້ນຄວ້າວິທະຍາສາດ**

ການປະເມີນຜົນ ຫົວຂໍ້ຄົ້ນຄວ້າວິທະຍາສາດ ແມ່ນສະພາບໍລິຫານກອງທຶນ ເປັນຜູ້ກໍານົດວິທີການຕີລາຄາປະເມີນຜົນຫົວຂໍ້ຄົ້ນຄວ້າວິທະຍາສາດ ຂອງຄະນະກໍາມະການວິຊາການ ຜ່ານຂະບວນການຕີລາຄາຜົນຂອງການຈັດຕັ້ງປະຕິບັດ, ເອກະສານ ແລະ ເງື່ອນໄຂຕ່າງໆ ທີ່ລະບຸໄວ້ໃນຫົວຂໍ້ຄົ້ນຄວ້າວິທະຍາສາດ.

ການຮັບຮອງຜົນ ຂອງຫົວຂໍ້ຄົ້ນຄວ້າວິທະຍາສາດ ແມ່ນການຕົກລົງຮັບຮອງຜົນການປະຕິບັດຫົວຂໍ້ຄົ້ນຄວ້າວິທະຍາສາດ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ບົນພື້ນຖານການຕີລາຄາຜົນຫົວຂໍ້ຄົ້ນຄວ້າວິທະຍາສາດ ຂອງຄະນະກໍາມະການວິຊາການ.

ສໍາລັບການປະເມີນຜົນຫົວຂໍ້ຄົ້ນຄວ້າວິທະຍາສາດ ທີ່ບໍ່ສໍາເລັດ ຫຼື ຖືກໂຈະສັນຍາ ແມ່ນຈະໄດ້ຮັບການແກ້ໄຂ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ການຄຸ້ມຄອງຊັບສິນ ຕໍ່ກັບຫົວຂໍ້ຄົ້ນຄວ້າ**

ການຄຸ້ມຄອງຊັບສິນ ຕໍ່ກັບຫົວຂໍ້ຄົ້ນຄວ້າ ແມ່ນຊັບສິນທີ່ເກີດຂຶ້ນໃນໄລຍະຈັດຕັ້ງປະຕິບັດຫົວຂໍ້ຄົ້ນຄວ້າ ທີ່ນໍາໃຊ້ງົບປະມານສະໜັບສະໜູນ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ຖືກຄຸ້ມຄອງ ໂດຍການຈັດຕັ້ງຮັບຜິດຊອບຫົວຂໍ້ຄົ້ນຄວ້າວິທະຍາສາດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການສະໜັບສະໜູນກິດຈະກໍາຍົກສູງຄວາມອາດສາມາດ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ

**ມາດຕາ 20 ການສະໜັບສະໜູນກິດຈະກໍາຍົກສູງຄວາມອາດສາມາດ ທາງດ້ານ ວິທະຍາສາດ ແລະ ເຕັກໂນໂລຊີ**

ການສະໜັບສະໜູນກິດຈະກໍາຍົກສູງຄວາມອາດສາມາດ ທາງດ້ານ ວິທະຍາສາດ ແລະ ເຕັກໂນໂລຊີ ແມ່ນການຍົກສູງຄວາມອາດສາມາດ, ຄຸນນະພາບການຄົ້ນຄວ້າວິທະຍາສາດ ຢູ່ ສປປ ລາວ ໂດຍຜ່ານການສ້າງສະພາບແວດລ້ອມທີ່ສະດວກ ເພື່ອເຮັດໃຫ້ບັນດານັກຄົ້ນຄວ້າ ມີການແລກປ່ຽນດ້ານການຄົ້ນຄວ້າວິທະຍາສາດ, ປະກາດເຜີຍແຜ່ຜົນງານການຄົ້ນຄວ້າ ແລະ ສາມາດເຊື່ອມໂຍງການຄົ້ນຄວ້າວິທະຍາສາດກັບສາກົນ. ໂດຍຜ່ານຂັ້ນຕອນການພິຈາລະນາເອກະສານຂໍການສະໜັບສະໜູນທີ່ໄດ້ກໍານົດ ເງື່ອນໄຂ, ມາດຕະຖານ, ເນື້ອໃນທີ່ໃຫ້ການສະໜັບສະໜູນ, ເອກະສານສະເໜີຂໍການສະໜັບສະໜູນ ແລະ ການລົງທະບຽນສະເໜີຂໍການສະໜັບສະໜູນ ຊຶ່ງປະກອບມີ ດັ່ງນີ້:

1. ການພິມຜົນງານລົງເຜີຍແຜ່ໃນວາລະສານວິທະຍາສາດສາກົນ;

2. ການຈົດທະບຽນປົກປ້ອງສິດທາງດ້ານຊັບສິນທາງປັນຍາ ສໍາລັບສິດທິບັດ, ອະນຸສິດທິບັດ ແລະ ພັນພືດໃໝ່ ຊຶ່ງນອນໃນຫົວຂໍ້ທີ່ຖືກຮັບຮອງ;

3. ການເຂົ້າຮ່ວມ ແລະ ລາຍງານຜົນການຄົ້ນຄວ້າໃນກອງປະຊຸມ, ສໍາມະນາວິທະຍາສາດສາກົນ;

4. ການຈັດກອງປະຊຸມສໍາມະນາວິທະຍາສາດ ພາຍໃນ ແລະ ສາກົນ ຢູ່ ສປປ ລາວ;

5. ການຄົ້ນຄວ້າເໜືອປະລິນຍາເອກ;

6. ການຄົ້ນຄວ້າໄລຍະສັ້ນຢູ່ຕ່າງປະເທດ.

**ມາດຕາ 21 ຂັ້ນຕອນພິຈາລະນາ ອະນຸມັດ**

ຂັ້ນຕອນພິຈາລະນາ ອະນຸມັດ ມີ ດັ່ງລຸ່ມນີ້:

1. ການອອກແຈ້ງການ ແລະ ການຮັບເອກະສານ;
2. ຕີລາຄາຄັດເລືອກ;
3. ການຕີລາຄາຜົນການຈັດຕັ້ງປະຕິບັດ.

**ມາດຕາ 22 ການອອກແຈ້ງການ ແລະ ການຮັບເອກະສານ**

1. ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ອອກແຈ້ງການກ່ຽວກັບການສະໜັບສະໜູນກິດຈະກໍາຍົກສູງຄວາມອາດສາມາດ ທາງດ້ານ ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ກອງທຶນໃຫ້ການສະໜັບສະໜູນ, ແນະນໍາກ່ຽວກັບເງື່ອນໄຂ, ຂັ້ນຕອນການປະກອບເອກະສານ ທີ່ກ່ຽວຂ້ອງ ແລະ ກໍານົດເວລາໃຫ້ບັນດາໜ່ວຍງານການຄົ້ນຄວ້າ, ນັກວິທະຍາສາດ, ນັກຄົ້ນຄວ້າ ສົ່ງເອກະສານໃຫ້ແກ່ກອງທຶນ;

2. ເອກະສານແມ່ນຈະຕ້ອງປະກອບໃຫ້ຖືກຕ້ອງຕາມແບບພິມທີ່ລະບຸໄວ້ໃນລະບຽບການ ພ້ອມທັງ ໄດ້ຮັບການຢັ້ງຢືນຈາກພາກສ່ວນການຈັດຕັ້ງທີ່ກ່ຽວຂ້ອງ ແລະ ສົ່ງທັນຕາມກໍານົດເວລາທີ່ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ວາງອອກ.

**ມາດຕາ 23 ການຕີລາຄາຄັດເລືອກຫົວຂໍ້ຄົ້ນຄວ້າ**

ການຕີລາຄາຄັດເລືອກຫົວຂໍ້ຄົ້ນຄວ້າ ແມ່ນການພິຈາລະນາເອກະສານສະເໜີຂໍການສະໜັບສະໜູນງົບປະມານຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຕາມຂັ້ນຕອນ ແລະ ລະບຽບການ. ການພິຈາລະນາເອກະສານ ແລະແຈ້ງຜົນ ພາຍໃນ 120 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ.

ການສະເໜີຂໍການສະໜັບສະໜູນຈະບໍ່ໄດ້ຮັບການພິຈາລະນາ ໃນກໍລະນີເອກະສານທີ່ບໍ່ຄົບຖ້ວນ ຫຼື ບໍ່ຕອບສະໜອງຕາມມາດຕະຖານ, ເງື່ອນໄຂ ແລະ ລະບຽບການທີ່ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ກໍານົດໄວ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການສະໜັບສະໜູນຈາກກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແມ່ນຈະຕ້ອງມີຄວາມຮັບຜິດຊອບ ຕາມຂໍ້ຕົກລົງ ແລະ ຄໍາແນະນໍາ ຂອງກອງທຶນ.

**ມາດຕາ 24 ການຕີລາຄາຜົນການຈັດຕັ້ງປະຕິບັດ**

ການຕີລາຄາຜົນການຈັດຕັ້ງປະຕິບັດ ແມ່ນການຕີລາຄາຜົນການຈັດຕັ້ງປະຕິບັດ ແຜນການ, ແຜນງານ, ສະພາບການ, ຜົນການຈັດຕັ້ງປະຕິບັດການນໍາໃຊ້ງົບປະມານ ທີ່ມີຄວາມຈໍາເປັນ ຂອງວຽກງານ, ພ້ອມທັງລາຍງານຜົນ ໃຫ້ແກ່ສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

ການລາຍງານຜົນສໍາເລັດ ໃນການຈັດຕັ້ງປະຕິບັດການສະໜັບສະໜູນກິດຈະກໍາ ຍົກສູງຄວາມອາດສາມາດດ້ານວິທະຍາສາດ ແລະ ເຕັກໂນໂລຊີ ປະກອບ ມີ ດັ່ງນີ້:

1. ບົດລາຍງານການເງິນ, ສະພາບ, ບັນດາກິດຈະກໍາ ແລະ ຜົນການຄົ້ນຄວ້າ ເປັນລາຍລັກອັກສອນ ຕາມແບບພິມ ແລະ ຕາມລະບຽບການ;

2. ເອກະສານຊ້ອນທ້າຍທີ່ກ່ຽວຂ້ອງ ກ່ຽວກັບກິດຈະກໍາສະໜັບສະໜູນ ຍົກສູງຄວາມອາດສາມາດ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ.

## ໝວດທີ 4
## ຖານຂໍ້ມູນນັກຄົ້ນຄວ້າ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

### ມາດຕາ 25 (ປັບປຸງ) ຖານຂໍ້ມູນນັກຄົ້ນຄວ້າ

ຖານຂໍ້ມູນນັກຄົ້ນຄວ້າ ແມ່ນບ່ອນເກັບຮັກສາຂໍ້ມູນນັກຄົ້ນຄວ້າ ໄວ້ຢ່າງເປັນລະບົບ ໃນຮູບແບບເອເລັກໂຕຣນິກ ທີ່ສາມາດຄຸ້ມຄອງ, ນໍາໃຊ້ ແລະ ປັບປຸງໄດ້;

ຖານຂໍ້ມູນນັກຄົ້ນຄວ້າ ຖືກສ້າງຂຶ້ນ ແລະ ຄຸ້ມຄອງ ໂດຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນພື້ນຖານ ໃຫ້ແກ່ການແຕ່ງຕັ້ງຄະນະກໍາມະການວິຊາການ ຄັດເລືອກວິຊາການສະເພາະດ້ານ ຫຼື ຊ່ຽວຊານເອກະລາດ ໃຫ້ຄໍາປຶກສາຕີລາຄາບັນດາຫົວຂໍ້ຄົ້ນຄວ້າວິທະຍາສາດ;

ການສະໝັກລົງທະບຽນ ຂອງນັກຄົ້ນຄວ້າໃນຖານຂໍ້ມູນ ຕ້ອງປະຕິບັດຕາມລະບຽບການ ທີ່ກອງທຶນພັດທະນາວິທະຍາດ ແລະ ເຕັກໂນໂລຊີ ກໍານົດໄວ້ແຕ່ລະໄລຍະ.

### ມາດຕາ 26 (ປັບປຸງ) ນັກວິຊາການຄົ້ນຄວ້າ

ນັກວິຊາການຄົ້ນຄວ້າ ແມ່ນຜູ້ທີ່ມີຄວາມຮູ້ສະເພາະດ້ານ, ຄວາມຊໍານານງານ, ມີເງື່ອນໄຂ, ມາດຕະຖານຄົບຖ້ວນ ແລະ ໄດ້ບັນຈຸໃນຖານຂໍ້ມູນນັກຄົ້ນຄວ້າ, ຖືກເຊີນ ຫຼື ໄດ້ຮັບການແຕ່ງຕັ້ງຈາກ ສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຕີລາຄາ, ຄັດເລືອກ, ຕິດຕາມ ກວດກາ ແລະ ປະເມີນຜົນການຄົ້ນຄວ້າວິທະຍາສາດ.

### ມາດຕາ 27 (ປັບປຸງ) ມາດຕະຖານ ຂອງນັກວິຊາການຄົ້ນຄວ້າ

**ນັກວິຊາການຄົ້ນຄວ້າ** ທີ່ມາຕີລາຄາ, ຄັດເລືອກ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຄົ້ນຄວ້າວິທະຍາສາດ ຕ້ອງມີມາດຕະຖານ ດັ່ງນີ້:

1. ລະດັບຄວາມຮູ້ ແລະ ປະສົບການ;
2. ຄວາມສາມາດວິຊາສະເພາະ;
3. ຄຸນທາດດ້ານວິທະຍາສາດ, ຈັນຍາບັນ-ຈັນຍາທໍາ.

### ມາດຕາ 28 (ປັບປຸງ) ຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງນັກວິຊາການຄົ້ນຄວ້າ

ນັກວິຊາການຄົ້ນຄວ້າກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມຕີລາຄາ, ປະກອບຄໍາເຫັນ, ພາວະວິໄສ, ແບບວິທະຍາສາດ ແລະ ຮັບຜິດຊອບກ່ຽວກັບຄໍາເຫັນຕີລາຄາ ສໍາລັບຫົວຂໍ້ຄົ້ນຄວ້າວິທະຍາສາດ ຂອງຕົນ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ;

2. ສະໜອງຂໍ້ມູນ ແລະ ແຈ້ງຜົນຂອງການຕີລາຄາ ຂອງຕົນໃຫ້ກອງທຶນ ຕາມເວລາທີ່ໄດ້ກໍານົດໄວ້;

3. ຮັກສາຄວາມລັບ ໃນການຕີລາຄາ, ສະໜອງຂໍ້ມູນ ທີ່ພົວພັນເຖິງຂັ້ນຕອນ ໃຫ້ຄຳປຶກສາຕີລາຄາ, ກົນໄກ, ນະໂຍບາຍກ່ຽວກັບວິທະຍາສາດ ແລະ ເຕັກໂນໂລຊີ;

4. ເຂົ້າຮ່ວມເປັນສະມາຊິກຄະນະກຳມະການວິຊາການ, ວິຊາການກັ່ນກອງ ມີສິດປະກອບຄຳຄິດຄຳເຫັນ ຫຼື ເປັນທີ່ປຶກສາປະກອບຄຳເຫັນເອກະລາດ ສຳລັບຫົວຂໍ້ຄົ້ນຄວ້າວິທະຍາສາດ ທີ່ກອງທຶນໃຫ້ການສະໜັບສະໜູນ ແລະ ບັນດາບັນຫາທີ່ກ່ຽວຂ້ອງອື່ນໆ;

5. ນຳໃຊ້ບັນຊີເຂົ້າໃນລະບົບຖານຂໍ້ມູນນັກຄົ້ນຄວ້າ ຂອງກອງທຶນ, ບັນຊີດັ່ງກ່າວຈະມີການກຳນົດຖານະເປັນ ນັກຄົ້ນຄວ້າ (ຈຳແນກກັບບັນຊີອື່ນໆ ຂອງນັກວິທະຍາສາດ ທີ່ບໍ່ແມ່ນນັກຄົ້ນຄວ້າ ຂອງກອງທຶນ);

6. ໄດ້ຮັບອັດຕາ, ຄ່າແຮງງານ ໃນການເຂົ້າຮ່ວມບັນດາການເຄື່ອນໄຫວໃຫ້ຄຳປຶກສາ ແລະ ຕີລາຄາຕາມລະບຽບ ການທີ່ປະກາດໃຊ້ໃນປັດຈຸບັນ.

7. ລາຍງານຜົນກະທົບເຖິງຂະບວນການໃຫ້ຄຳເຫັນຕີລາຄາຂອງຕົນ ຫຼື ຜູ້ຊ່ຽວຊານອື່ນໆ ໃຫ້ແກ່ກອງທຶນ ຮັບຊາບ;

8. ຮັກສາຄວາມລັບ ຂໍ້ມູນສ່ວນບຸກຄົນໃນຖານຂໍ້ມູນ ຂອງນັກຄົ້ນຄວ້າ ແລະ ບັນດາຂໍ້ມູນການເຄື່ອນໄຫວວຽກ ງານການໃຫ້ຄຳເຫັນຕີລາຄາ, ຍົກເວັ້ນກໍລະນີມີສັນຍາ ຫຼື ກົດໝາຍທີ່ໄດ້ກຳນົດໄວ້ຕ່າງຫາກ. ບໍ່ນຳໃຊ້ເນື້ອໃນຂອງຫົວຂໍ້ ຄົ້ນຄວ້າວິທະຍາສາດ ທີ່ຕົນເອງໄດ້ເຂົ້າຮ່ວມໃຫ້ຄຳເຫັນຕີລາຄາໃຫ້ແກ່ເປົ້າໝາຍອື່ນ;

9. ປັບປຸງຂໍ້ມູນຊີວະປະຫວັດຫຍໍ້ ດ້ານວິທະຍາສາດຂອງນັກຄົ້ນຄວ້າ ຕາມການຄຳແນະນຳວ່າດ້ວຍນັກຄົ້ນຄວ້າ ຂອງກອງທຶນ;

10. ຊຸກຍູ້, ຕິດຕາມ ກວດກາ ບັນດາຫົວຂໍ້ຄົ້ນຄວ້າວິທະຍາສາດ ທີ່ໄດ້ຮັບການສະໜັບສະໜູນ ພ້ອມທັງ ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານການຄົ້ນຄວ້າວິທະຍາສາດ ໃຫ້ແກ່ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;

11. ປະຕິບັດສິດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ຄຳແນະນຳ ແລະ ສັນຍາ ທີ່ກ່ຽວຂ້ອງ.

## ໝວດທີ 5
## ຄະນະກຳມະການວິຊາການ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

### ມາດຕາ 29 ຄະນະກຳກະການວິຊາການ

ຄະນະກຳມະການວິຊາການ ແມ່ນຜູ້ທີ່ຖືກແຕ່ງຕັ້ງ ຈາກສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນຄະນະຮັບຜິດຊອບ ໃນການຕີລາຄາ, ຄັດເລືອກ, ຕິດຕາມ, ກວດກາ ແລະ ປະເມີນຜົນ ຂອງການ ຄົ້ນຄວ້າວິທະຍາສາດ, ຊຶ່ງລວມມີ ນັກວິທະຍາສາດ ທີ່ນອນໃນຖານຂໍ້ມູນຂອງນັກຄົ້ນຄວ້າ ຂອງກອງທຶນ, ຜູ້ບໍລິຫານ ຄຸ້ມຄອງທີ່ມີລະດັບວິຊາສະເພາະສູງ. ສຳລັບສະມາຊິກຄະນະກຳມະການວິຊາການ ຕ້ອງຖືກຄັດເລືອກບົນພື້ນຖານ ຜົນງານວິຊາສະເພາະ, ມີຄວາມເຊື່ອໝັ້ນຈາກບັນດານັກວິທະຍາສາດ ແລະ ນັກບໍລິຫານຮ່ວມຂົງເຂດວິຊາສະເພາະ ດຽວກັນ.

### ມາດຕາ 30 (ປັບປຸງ) ໂຄງປະກອບຂອງຄະນະກຳມະການວິຊາການ

ຄະນະກຳມະການວິຊາການ ມີຈຳນວນ 5-9 ທ່ານ; ລວມມີປະທານ, ຮອງປະທານ, ເລຂາ, ສະມາຊິກປະກອບ

ຄຳເຫັນ ແລະ ສະມາຊິກອື່ນໆ. ນອກຈາກນີ້, ສະພາບໍລິຫານກອງທຶນ ສາມາດຕົກລົງຈະເພີ່ມ ຫຼື ຫຼຸດຈຳນວນສະມາຊິກ ແລະ ອົງປະກອບຄະນະກຳມະການວິຊາການ ຕາມເງື່ອນໄຂ ແລະ ສະພາບຄວາມເປັນຈິງ.

**ມາດຕາ 31 (ປັບປຸງ) ຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ຂອງຄະນະກຳມະການວິຊາການ**

ຄະນະກຳມະການວິຊາການ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມຕີລາຄາ, ປະກອບຄຳເຫັນ, ພາວະວິໄສ, ແບບວິທະຍາສາດ ແລະ ຮັບຜິດຊອບ ກ່ຽວກັບຄຳເຫັນຕີລາຄາ ສຳລັບຫົວຂໍ້ຄົ້ນຄວ້າວິທະຍາສາດ ຂອງຕົນ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ;

2. ສະໜອງຂໍ້ມູນ ແລະ ແຈ້ງຜົນຂອງການຕີລາຄາ ຂອງຕົນໃຫ້ກອງທຶນ ຕາມເວລາທີ່ໄດ້ກຳນົດໄວ້;

3. ຮັກສາຄວາມລັບໃນການຕີລາຄາ, ສະໜອງຂໍ້ມູນ ທີ່ພົວພັນເຖິງຂັ້ນຕອນ ໃຫ້ຄຳຄຳເຫັນຕີລາຄາ, ກົນໄກ, ນະໂຍບາຍກ່ຽວກັບວິທະຍາສາດ ແລະ ເຕັກໂນໂລຊີ;

4. ຮັບຜິດຊອບກ່ຽວກັບຄຳເຫັນຕີລາຄາຂອງຕົນ ແລະ ຮັບຜິດຊອບເປັນໝູ່ຄະນະ ກ່ຽວກັບການຕີລາຄາ ດັ່ງກ່າວ;

5. ຄົ້ນຄວ້າບັນດາເອກະສານ, ຂຽນຄຳເຫັນຕີລາຄາຕາມແບບພິມ ແລະ ກຳນົດໄລຍະ;

6. ມີສິດບໍ່ອອກຄຳເຫັນ ໃນກໍລະນີທີ່ມີຄຳເຫັນແຕກຕ່າງກັບຂໍ້ສະຫຼຸບລວມຂອງຄະນະກຳມະການວິຊາການ ແລະ ບໍ່ຈຳເປັນຮັບຜິດຊອບລວມໝູ່ ກ່ຽວກັບຂໍ້ສະຫຼຸບລວມຂອງຄະນະກຳມະການວິຊາການ;

7. ໄດ້ຮັບຄ່າແຮງງານເຂົ້າຮ່ວມບັນດາກິດຈະກຳຕີລາຄາ ແລະ ໃຫ້ຄຳປຶກສາ, ຕາມລະບຽບການທີ່ປະກາດໃຊ້ ໃນປະຈຸບັນ;

8. ຊຸກຍູ້, ຕິດຕາມ, ກວດກາ ບັນດາຫົວຂໍ້ຄົ້ນຄວ້າວິທະຍາສາດ ທີ່ໄດ້ຮັບການສະໜັບສະໜູນ ພ້ອມທັງ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານການຄົ້ນຄວ້າວິທະຍາສາດ ໃຫ້ແກ່ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;

9. ປະຕິບັດສິດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ຄຳແນະນຳ ແລະ ສັນຍາ ທີ່ກ່ຽວຂ້ອງ.

**ມາດຕາ 32 ກອງປະຊຸມ ຂອງຄະນະກຳມະການວິຊາການ**

ກອງປະຊຸມ ຂອງຄະນະກຳມະການວິຊາການ ໃຫ້ປະຕິບັດຖືກຕ້ອງ ແລະ ສອດຄ່ອງຕາມຫຼັກການ ປະຊາທິປະໄຕ, ພາວະວິໄສ, ປະຕິບັດຕາມກົດໝາຍ, ມີຈັນຍາບັນ-ຈັນຍາທຳ ທາງດ້ານວິທະຍາສາດ. ກອງປະຊຸມ ຕ້ອງດຳເນີນການຕາມຂັ້ນຕອນ, ວິທີການເຮັດວຽກ ລວມໄປເຖິງຂະບວນການ ກະກຽມກອງປະຊຸມ ຄະນະກຳມະການວິຊາການ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 33 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນວຽກງານການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ລະເມີດກົດໝາຍ;

2. ສ້າງອຸປະສັກ, ຂັດຂວາງການສົ່ງເສີມ ແລະ ພັດທະນາວຽກງານວິທະຍາສາດ ແລະ ເຕັກໂນໂລຊີ;

3. ນຳເຂົ້າເຕັກໂນໂລຊີ ທີ່ເຮັດໃຫ້ສິ້ນເປືອງແຫຼ່ງຊັບພະຍາກອນທຳມະຊາດ, ສ້າງຜົນກະທົບ, ທຳລາຍ ສິ່ງແວດລ້ອມ ເກີນມາດຕະຖານທີ່ໄດ້ກຳນົດໄວ້;

4. ແອບອ້າງເອົາຜົນງານຄົ້ນຄວ້າຂອງຜູ້ອື່ນມາເປັນຂອງຕົນ;

5. ດັດແປງເຕັກນິກທີ່ບໍ່ຖືກຕ້ອງ ອັນກໍ່ໃຫ້ເກີດອັນຕະລາຍແກ່ສັງຄົມ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 34 ຂໍ້ຫ້າມ ສໍາລັບ ຄະນະສະພາບໍລິຫານ, ກອງເລຂາ, ຄະນະກໍາມະການວິຊາການ ແລະ ຜູ້ຊ່ຽວຊານ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ**

ຫ້າມຄະນະສະພາບໍລິຫານ, ກອງເລຂາ, ຄະນະກໍາມະການວິຊາການ ແລະ ຜູ້ຊ່ຽວຊານ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີພຶດຕິກໍາ ດັ່ງນີ້:

1. ຫ້າມສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ, ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;

2. ຫ້າມເປີດເຜີຍຄວາມລັບ ຂອງຜູ້ດໍາເນີນວຽກງານຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ;

3. ຫ້າມກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການພິຈາລະນາເອກະສານ;

4. ຫ້າມໃຫ້ ຫຼື ຮັບເອົາສິນບົນ ຫຼື ຜົນປະໂຫຍດອື່ນ;

5. ຫ້າມບໍ່ໃຫ້ມີພຶດຕິກໍາໃດໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 35 ຂໍ້ຫ້າມ ສໍາລັບຜູ້ດໍາເນີນວຽກງານການຄົ້ນຄວ້າ**

ຫ້າມຜູ້ດໍາເນີນວຽກງານການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ມີພຶດຕິກໍາ ດັ່ງນີ້:

1. ຫ້າມນໍາໃຊ້ງົບປະມານການຄົ້ນຄວ້າບໍ່ຖືກຕ້ອງ ແລະ ສອດຄ່ອງ ຕາມຈຸດປະສົງ, ເປົ້າໝາຍ ຂອງຫົວຂໍ້ຄົ້ນຄວ້າ, ໂຄງການຄົ້ນຄວ້າວິທະຍາສາດ;

2. ຫ້າມເປີດເຜີຍຜົນການຄົ້ນຄວ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;

3. ຫ້າມໃຫ້ສິນບົນແກ່ພະນັກງານ ທີ່ຮັບຜິດຊອບວຽກງານການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ;

4. ຫ້າມປອມແປງເອກະສານທາງລັດຖະການ ທີ່ກ່ຽວກັບວຽກງານການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ;

5. ຫ້າມບໍ່ໃຫ້ມີພຶດຕິກໍາໃດໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 7
## ອົງການຄຸ້ມຄອງວຽກງານການຄົ້ນຄວ້າວິທະຍາສາດ

**ມາດຕາ 36 ອົງການຄຸ້ມຄອງ**

ສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເຈົ້າການຮັບຜິດຊອບໂດຍກົງ ດ້ວຍການປະສານສົມທົບກັບ ບັນດາກະຊວງ, ສະຖາບັນທີ່ເຮັດການຄົ້ນຄວ້າ, ມະຫາວິທະຍາໄລ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ປະກອບດ້ວຍ:

1. ສະພາບໍລິຫານກອງທຶນ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;

2. ກອງເລຂາກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ**

ສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ຜັນຂະຫຍາຍ ແລະ ຈັດຕັ້ງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ພິຈາລະນາຮັບຮອງແຜນການ, ແຜນງານ, ຫົວຂໍ້ຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ, ນະວັດຕະກໍາ ແລະ ງົບປະມານ ການເຄື່ອນໄຫວວຽກງານກອງທຶນ;

3. ອອກລະບຽບ, ຄໍາແນະນໍາ ກ່ຽວກັບການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສະພາບໍລິຫານ, ຄຸ້ມຄອງ ແລະ ນໍາໃຊ້ກອງທຶນ;

4. ນັດໝາຍປະຊຸມສະໄໝສາມັນ, ວິສາມັນ ຂອງສະພາບໍລິຫານກອງທຶນ;

5. ແຕ່ງຕັ້ງກອງເລຂາ, ພະນັກງານຊ່ວຍວຽກ, ຊີ້ນໍາ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ;

6. ແຕ່ງຕັ້ງຄະນະກໍາມະການວິຊາການດ້ານຕ່າງໆ ເພື່ອປະຕິບັດໜ້າທີ່ວຽກງານຂອງກອງທຶນ;

7. ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າໃຫ້ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ເຕີບໃຫຍ່ຂະຫຍາຍຕົວ;

8. ຕິດຕາມ, ກວດສອບ, ຄຸ້ມຄອງການເຄື່ອນໄຫວ ແລະ ນໍາໃຊ້ທຶນ ໃນການບໍລິຫານຈັດການໃຫ້ຖືກຕ້ອງຕາມແຜນການ ແລະ ສອດຄ່ອງກັບເປົ້າໝາຍນໍາໃຊ້, ມີຄວາມໂປ່ງໃສ ແລະ ມີປະສິດທິພາບສູງ;

9. ຄຸ້ມຄອງ, ກວດກາ ແລະ ສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນໃຫ້ລັດຖະບານຢ່າງໜ້ອຍປີລະສອງຄັ້ງ;

10. ປະຕິບັດສິດໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 38 ສິດ ແລະ ໜ້າທີ່ ກອງເລຂາ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ**

ກອງເລຂາກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ສະພາບໍລິຫານກອງທຶນ ໃນການຄຸ້ມຄອງບໍລິຫານການເຄື່ອນໄຫວວຽກງານ ແລະ ບັນຊີ-ການເງິນ ຂອງກອງທຶນ;

2. ສ້າງ, ສັງລວມ, ນໍາສະເໜີແຜນການເຄື່ອນໄຫວນໍາໃຊ້ກອງທຶນ ຕໍ່ສະພາບໍລິຫານກອງທຶນ ພິຈາລະນາ ແລະ ຮັບຮອງ;

3. ຄົ້ນຄວ້າສ້າງລະບຽບການ, ຄໍາແນະນໍາກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ, ການຄຸ້ມຄອງ ແລະ ການນໍາໃຊ້ກອງທຶນ;

4. ສຶກສາ, ຄົ້ນຄວ້າ ໃນຮູບແບບການລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ;

5. ໂຄສະນາເຜີຍແຜ່ ກ່ຽວກັບຄວາມໝາຍສໍາຄັນ ແລະ ພາລະບົດບາດຂອງກອງທຶນ;

6. ຕິດຕາມ, ກວດກາ ແລະ ປະເມີນຜົນການນໍາໃຊ້ກອງທຶນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;

7. ປະສານສົມທົບ ແລະຈັດຕັ້ງປະຕິບັດໜ້າທີ່ຂອງຕົນພາຍໃຕ້ການຊີ້ນໍາຂອງສະພາບໍລິຫານກອງທຶນ;

8. ພົວພັນຮ່ວມມືກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ;

9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງກອງທຶນ ໃນແຕ່ລະໄລຍະ;

10. ປະຕິບັດສິດໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານກອງທຶນ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 39 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບຫຼັກການ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 40 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ຮັບຜິດຊອບຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ໜັກ ຫຼື ເບົາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ມອບໃຫ້ກອງເລຂາ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ ແລະ ມີປະສິດທິຜົນ ພ້ອມທັງລາຍງານການເຄື່ອນໄຫວ ເປັນລາຍລັກອັກສອນ ໃຫ້ສະພາບໍລິຫານ ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເປັນປົກກະຕິ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 006/ກພວຕ, ລົງວັນທີ 26 ມີນາ 2023.

**ມາດຕາ 42 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**

ທອງສະລິດ ມັງໜໍ່ເມກ